# ປຽບທຽບຜົນຜະລິດເຂົ້າໜຽວ 5 ແນວພັນ

# Yield Trial’s 5 Varieties of Rice

**ນັກສຶກສາ:** ທ. ເສືອ ທິບພະລັງສີ, ທ. ອຸມາລາ ອິນສີຊຽງໃໝ່

**ອາຈານຊີ້ນຳ:** ໂນແອນ ບົວທອງ

**ພາກວິຊາ:** ປູກພືດ, ປີ 2009.

## ບົດຄັດຫຍໍ້

ການທົດລອງປຽບທຽບຜົນຜະລິດເຂົ້າໜຽວ5 ແນວພັນໃນຄັ້ງນີ້ແມ່ນມີຈຸດປະສົງເພື່ອປຽບທຽບປະສິດທິພາບ ຫາແນວພັນ ທີ່ໃຫ້ຜົນຜະລິດສູງ ແລະ ຊອກຫາແນວພັນ ທີ່ເໝາະສົມກັບ ສະພາບ ພື້ນທີ່ໃນເຂດບ້ານເປົ້າໝາຍ ໂດຍນຳໃຊ້ແນວພັນເຂົ້າ 5 ແນວພັນຄື: ແນວພັນເຂົ້າຫອມທົ່ງ ( ແນວພັນພື້ນເມືອງ ), ແນວພັນເຂົ້າທ່າສະໂນ 5, ແນວພັນ ເຂົ້າໂພນງາມ 1, ແນວພັນເຂົ້າທ່າສະໂນ 6 ແລະ ແນວພັນເຂົ້າທ່າສະໂນ7ໃຊ້ແຜນການທົດລອງແບບ Randomized Completed Block Desing ( RCBD ) ປະກອບມີ 15 ແປງ, 3 ຊໍ້າ ແລະ 5 ສິ່ງທົດລອງ (Treatment) ຂະໜາດຂອງແປງທົດລອງແມ່ນ 2m x 2m ໄລຍະຫ່າງຂອງການປັກດຳແມ່ນ 20cm x 20cm ແລະ ໄດ້ປະຕິບັດຕົວຈິງຢູ່ທີ່ ບ້ານນາພະນຽດ ເມືອງທ່າປາງທອງ ແຂວງ ສະຫວັນນະເຂດ ພາຍໃຕ້ການຊີ້ນຳຂອງສະມາຄົມບໍ່ຫວັງຜົນກຳໄລ ເພື່ອການສະໜັບສະໜູນ ແລະ ປັບປຸງຊົນນະບົດລາວ (ສະມາຄົມໜໍ່ໄມ້) ການທົດລອງຄັ້ງນີ້ ໃຊ້ເວລາທັງໝົດ5ເດືອນ, ເຊິ່ງເລີ່ມແຕ່ວັນທີ່ 23/5/ 09-13/10/09 ຫລັງສຳເລັດການທົດລອງ, ຈາກການທົດລອງເຫັນວ່າ ແນວພັນເຂົ້າ 5 ແນວພັນ ຄື: ຫອມທົ່ງ,ໂພນງາມ 1, ທ່າສະໂນ 5, ທ່າສະໂນ 6, ທ່າສະໂນ 7 ຫລັງຈາກສິ້ນສຸດການທົດລອງ

ແລ້ວສັງເກດເຫັນວ່າ: ຄວາມສູງ ຂອງແຕ່ລະແນວພັນ ແມ່ນບໍ່ມີຄວາມຫລຸດລື່ນກັນຫລາຍຄ: 131

33, 123.86, 103, 129.13 ແລະ 116.93 cm ຕາມລຳດັບ ການອອກດອກແມ່ນບໍ່ພ້ອມກັນສາເຫດແມ່ນອາດເນື່ອງມາຈາກແນວພັນ ແມ່ນແຕກຕ່າງກັນ ແຕ່ກໍ່ບໍ່ຫລຸດລື່ນກັນຫລາຍແນວພັນ ທີ່ອອກດອກໄວກວ່າໝູ່ ແມ່ນແນວພັນເຂົ້າທ່າສະໂນ 5 ແລະ ສະມັດຕະພາບຜົນຜະລິດ ຂອງແນວພັນເຂົ້າເຫັນວ່າແນວພັນທີ່ໃຫ້ຜົນຜະລິດສູງກວ່າໝູ່ແມ່ນແນວພັນເຂົ້າທ່າສະໂນ 6 ເຊິ່ງໃຫ້ຜົນຜະ

ລິດແມ່ນ 2,06 ກລ/ແປງ ເທົ່າກັບ 5.150 kg / ha ຈາກການທົດລອງເຫັນວ່າ ແນວພັນເຂົ້າທີ່ໃຫ້ຜົນຜະລິສູງກວ່າໝູ່ແມ່ນນແນວພັນເຂົ້າ ທ່າສະໂນ 6 ແລະ ເປັນແນວພັນທີ່ມີຄວາມສາມາດປັບຕົວເຂົ້າກັບສະພາບແວດລ້ອມທີ່ແຫ້ງແລ້ງ ໄດ້ດີ, ມີເໝາະສົມໃນເຂດນີ້ ແລະ ຍັງເປັນແນວພັນທີ່ສາມາດນຳໄປສົ່ງເສີມໃຫ້ແກ່ຊາວກະສິ ກອນໃນເຂດການຜະລິດທີ່ມີຄວາມແຫ້ງແລ້ງ.